**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ — ເລກທີ: 17629....../ຍທຂ

ຄະນະຮັບຜິດຊອບການເຮັດທົດລອງ 3 ສ້າງ — ນະຄອນຫລວງວຽງຈັນ, ວັນທີ:....23/10/2012..

# ແຜນດຳເນີນງານ

## ຂອງຄະນະຮັບຜິດຊອບເຮັດທົດລອງສາມສ້າງ ກະຊວງ ຍທຂ

- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ, ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012 ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ (ສາມສ້າງ).
- ອີງຕາມຄຳສັ່ງແນະນຳເພີ່ມເຕີມຂອງຄະນະເລຂາທິການສູນກາງພັກ, ສະບັບເລກທີ 21/ຄລສພ, ລົງວັນທີ 7/8/2012.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 15/6/2012.

- **ແຜນການສຳລັບສົກປີ 2012-2013 (1/10/2012-30/9/2013):**

| ກຳນົດເວລາ | ເນື້ອໃນລະອຽດສຳລັບຈັດຕັ້ງປະຕິບັດ |
|---|---|
| 10/2012 | ▪ ສົ່ງຮ່າງຂໍ້ຕົກລົງ (ສະບັບປັບປຸງ) ຂອງກະຊວງວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ຍທຂ ເມືອງ (ສຳລັບ 51 ເມືອງເປົ້າໝາຍທົດລອງ) ໃຫ້ບັນດາແຂວງ, ນະຄອນຫລວງ, ພະແນກ ຍທຂ, ແລະຫ້ອງການ ຍທຂ ເມືອງ ມີຄວາມເຫັນ, ໄປພ້ອມກັບການສົ່ງລວມບັນຊີບັນດາໜ້າວຽກທີ່ມີໃນປະຈຸບັນ ເພື່ອແບ່ງຂັ້ນຄຸ້ມຄອງຂອງກະຊວງ ແລະອັນໃດຈະເພີ່ມໃຫ້ແຂວງ, ນະຄອນຫລວງ ແລະ ເມືອງເປົ້າໝາຍທົດລອງ.<br>▪ ຄົ້ນຄວ້າກຳນົດຕົວເລກລັດຖະກອນສົກປີ 2012-2013 ໃຫ້ 51 ເມືອງເປົ້າໝາຍ.<br>▪ ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມຄຳສັ່ງແນະນຳຂອງກະຊວງ ສະບັບເລກທີ 15562/ຍທຂ, ລົງວັນທີ 17/9/2012, ແຜນດຳເນີນງານທົດລອງສາມສ້າງຂອງກະຊວງພ້ອມທັງປຶກສາຫາລືກ່ຽວກັບທິດທາງເພື່ອຂັບຂະຫຍາຍ ແລະຈັດຕັ້ງປະຕິບັດ ໂດຍເລັ່ງໃສ່ສຸມທົດລອງສາມສ້າງຢູ່ນະຄອນຫລວງວຽງຈັນເປັນບາດກ້າວທຳອິດ, ໂດຍມີການເຂົ້າຮ່ວມຂອງ: (1) ຄະນະຮັບຜິດຊອບ ແລະຄະນະວິຊາການຊ່ວຍວຽກເຮັດທົດລອງສາມສ້າງຂອງກະຊວງ; (2) ບັນດາກົມ/ກອງທີ່ກ່ຽວຂ້ອງ; (3) ພະແນກ ຍທຂ ນະຄອນຫລວງ; ແລະ (4) ຫ້ອງການ ຍທຂ ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະເມືອງສັງທອງ. ໃນນັ້ນ ລົງເຮັດວຽກຢູ່ເມືອງຈັນທະບູລີ ແລະສີສັດຕະນາກໃນກາງເດືອນ 10/2012 ແລະຢູ່ເມືອງສັງທອງໃນທ້າຍເດືອນ 10/2012. ສ່ວນແຂວງອື່ນໆຈະແຈ້ງບັນຊີໜ້າວຽກຕ່າງໆເພື່ອໃຫ້ກຽມພ້ອມຈັດຕັ້ງປະຕິບັດ.<br>▪ ຄະນະວິຊາການຊ່ວຍວຽກເປັນເຈົ້າການ ສົມທົບກັບບັນດາກົມ/ກອງທີ່ກ່ຽວຂ້ອງເຮັດ |

| | |
|---|---|
| | ວຽກໂດຍກົງກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ 03 ຫ້ອງການ ຍທຂ ເມືອງເປົ້າໝາຍໃນນະຄອນຫລວງວຽງຈັນ ເພື່ອເກັບກຳຂໍ້ມູນເພີ່ມເຕີມກ່ຽວກັບບັນຫາຕ່າງໆທີ່ຍັງຄ້າງຄາອັດຕັນ ໃນການປະຕິບັດຕາມຄຳສັ່ງແນະນຳສະບັບດັ່ງກ່າວ.<br>▪ ຄະນະວິຊາການຊ່ວຍວຽກເປັນເຈົ້າການ ສົມທົບກັບບັນດາກົມ/ກອງທີ່ກ່ຽວຂ້ອງຮ່າງ/ສ້າງນິຕິກຳເພີ່ມເຕີມ ແລະປຶ້ມຄູ່ມື ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຄຳສັ່ງແນະນຳ, ໂດຍຈັດແບ່ງຕາມຂົງເຂດວຽກງານວິຊາສະເພາະເຊັ່ນ: ຂົງເຂດຂົວທາງ, ເຄຫາ-ຜັງເມືອງ, ຂົນສົ່ງ, ໂຍທາທິການທາງນ້ຳ ແລະອື່ນໆ |
| 11/2012 | ▪ ຄະນະວິຊາການຊ່ວຍວຽກ+ກົມ/ກອງທີ່ກ່ຽວຂ້ອງ ລົງເຜີຍແຜ່ເຊື່ອມຊຶມບັນດານິຕິກຳເພີ່ມເຕີມ ແລະປຶ້ມຄູ່ມືໃຫ້ພະແນກ ຍທຂ ນວ ແລະຫ້ອງການ ຍທຂ ບັນດາເມືອງເປົ້າໝາຍ.<br>▪ ສຳເລັດການປັບປຸງຂໍ້ຕົກລົງຂອງກະຊວງ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ຍທຂ ເມືອງເປົ້າໝາຍທົດລອງ, ພ້ອມທັງຈັດເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບເພື່ອຈັດຕັ້ງປະຕິບັດ.<br>▪ ປັບປຸງຂໍ້ຕົກລົງຂອງກະຊວງ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກ ຍທຂ ແຂວງ ແລະນະຄອນຫລວງ ແລະສົ່ງໃຫ້ບັນດາເຈົ້າແຂວງ ແລະເຈົ້າຄອງນະຄອນຫລວງ ເພື່ອມີຄວາມເຫັນ. |
| 12/2012 | ▪ ສຳເລັດການປັບປຸງຂໍ້ຕົກລົງຂອງກະຊວງ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກ ຍທຂ ແຂວງ ແລະນະຄອນຫລວງ, ພ້ອມທັງຈັດເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອ ງໄດ້ຮັບຊາບເພື່ອຈັດຕັ້ງປະຕິບັດ.<br>▪ ບັນດາຫົວໜ້າກົມ/ກອງ ພ້ອມພະນັກງານວິຊາການທີ່ກ່ຽວຂ້ອງ ລົງນຳຊ່ວຍພະແນກ ຍທຂ ນະຄອນຫລວງວຽງຈັນ ແລະຫ້ອງການ ຍທຂ ບັນດາເມືອງ ເຮັດທົດລອງປະຕິບັດບັນດາໜ້າວຽກຕາມຄຳສັ່ງແນະນຳ.<br>▪ ຄະນະວິຊາການຊ່ວຍວຽກ ເຮັດບົດລາຍງານຜົນການທົດລອງຈັດຕັ້ງປະຕິບັດສາມສ້າງ ສຳລັບໄຕມາດທີ 1 ໃຫ້ຄະນະຮັບຜິດຊອບສາມສ້າງຂອງກະຊວງ. |
| 1/2013 | ▪ ຄະນະຊີ້ນຳ, ຄະນະວິຊາການຊ່ວຍວຽກ ແລະບັນດາກົມ/ກອງກ່ຽວຂ້ອງລົງເຜີຍແຜ່ເຊື່ອມຊຶມຄຳສັ່ງແນະນຳ, ແຜນດຳເນີນງານຂອງກະຊວງ, ບັນດານິຕິກຳເພີ່ມເຕີມ ແລະປຶ້ມຄູ່ມືຢູ່ບັນດາແຂວງໂດຍແບ່ງເປັນແຕ່ລະພາກດັ່ງນີ້:<br>- ພາກເໜືອ 1: ຈັດທີ່ແຂວງອຸດົມໄຊ (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງບໍ່ແກ້ວ, ຫລວງນ້ຳທາ ແລະຜົ້ງສາລີ ເຂົ້າຮ່ວມ)<br>- ພາກເໜືອ 2: ຈັດທີ່ແຂວງຫລວງພະບາງ (ໂດຍເຊີນພະແນກ ຍທຂ ແລະ ຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ ເຂົ້າຮ່ວມ) |
| 2/2013 | ▪ ຄະນະຊີ້ນຳ, ຄະນະວິຊາການຊ່ວຍວຽກ ແລະບັນດາກົມ/ກອງກ່ຽວຂ້ອງລົງເຜີຍແຜ່ເຊື່ອມຊຶມຄຳສັ່ງແນະນຳ, ແຜນດຳເນີນງານຂອງກະຊວງ, ບັນດານິຕິກຳເພີ່ມເຕີມ ແລະປຶ້ມຄູ່ມືຢູ່ບັນດາແຂວງໂດຍແບ່ງເປັນແຕ່ພາກດັ່ງນີ້:<br>- ພາກກາງ: ຈັດທີ່ແຂວງບໍລິຄຳໄຊ (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ |

| | |
|---|---|
| | ບັນດາເມືອງເຮັດທົດລອງຈາກແຂວງວຽງຈັນ, ຄໍາມ່ວນ ແລະສະຫວັນນະເຂດ (ເຂົ້າຮ່ວມ)<br>- ພາກໃຕ້: ຈັດທີ່ແຂວງຈໍາປາສັກ (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງສາລະວັນ, ເຊກອງ ແລະອັດຕະປືເຂົ້າຮ່ວມ) |
| 3/2013 | ▪ ສໍາເລັດການປັບປຸງພາລະບົດບາດຂອງກະຊວງ (ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງ ຍທຂ ສະບັບປັບປຸງໃໝ່) ເພື່ອສະເໜີຂໍອະນຸມັດຈາກລັດຖະບານ.<br>▪ ບັນດາຫົວໜ້າກົມ/ກອງ ພ້ອມພະນັກງານວິຊາການທີ່ກ່ຽວຂ້ອງ ສືບຕໍ່ລົງຊ່ວຍ ແລະ ຕິດຕາມນໍາພາພະແນກ ຍທຂ ບັນດາແຂວງ ແລະຫ້ອງການ ຍທຂ ບັນດາເມືອງເປົ້າໝາຍ (ພາກເໜືອ 1 ແລະ 2) ໃນການເຮັດທົດລອງປະຕິບັດບັນດາໜ້າວຽກຕາມຄໍາສັ່ງແນະນໍາ.<br>▪ ຄະນະວິຊາການຊ່ວຍວຽກ ເຮັດບົດລາຍງານຜົນການທົດລອງຈັດຕັ້ງປະຕິບັດສາມສ້າງ ສໍາລັບໄຕມາດທີ 2 ໃຫ້ຄະນະຮັບຜິດຊອບສາມສ້າງຂອງກະຊວງ. |
| 4/2013 | ▪ ບັນດາຫົວໜ້າກົມ/ກອງ ພ້ອມພະນັກງານວິຊາການທີ່ກ່ຽວຂ້ອງ ສືບຕໍ່ລົງຊ່ວຍ ແລະ ຕິດຕາມນໍາພະແນກ ຍທຂ ບັນດາແຂວງ ແລະຫ້ອງການ ຍທຂ ບັນດາເມືອງເປົ້າໝາຍ (ພາກກາງ ແລະພາກໃຕ້) ໃນການເຮັດທົດລອງປະຕິບັດບັນດາໜ້າວຽກຕາມຄໍາສັ່ງແນະນໍາ. |
| 5-8/2013 | ▪ ຕິດຕາມ, ຊຸກຍູ້ ແລະຊ່ວຍເຫຼືອການຈັດຕັ້ງປະຕິບັດທົດລອງສາມສ້າງຂອງທ້ອງຖິ່ນ.<br>▪ ຄະນະວິຊາການຊ່ວຍວຽກ ເຮັດບົດລາຍງານຜົນການທົດລອງຈັດຕັ້ງປະຕິບັດສາມສ້າງ ສໍາລັບໄຕມາດທີ 3 ໃຫ້ຄະນະຮັບຜິດຊອບສາມສ້າງຂອງກະຊວງ. |
| 9/2013 | ▪ ສະຫຼຸບສັງລວມ ແລະຖອດຖອນບົດຮຽນ ການເຮັດທົດລອງສາມສ້າງຂອງຂະແໜງ ຍທຂ ສໍາລັບສົກປີ 2012-2013 ແລະລາຍງານໃຫ້ຄະນະຮັບຜິດຊອບຊີ້ນໍາເຮັດທົດລອງຂັ້ນສູນກາງ. |

ລັດຖະມົນຕີວ່າການ,

ຫົວໜ້າຄະນະຮັບຜິດຊອບການເຮັດທົດລອງສາມສ້າງ

**ສົມມາດ ພົລເສນາ**

<u>ສໍາເນົາປ່າວສົ່ງ:</u>

- ເຈົ້າແຂວງ ແລະເຈົ້າຄອງນະຄອນຫລວງວຽງຈັນ ທ່ານລະ — 01 ສະບັບ ເພື່ອປະສານສົມທົບ
- ຫົວໜ້າກອງເລຂາຄະນະຮັບຜິດຊອບຊີ້ນໍາເຮັດທົດລອງສາມສ້າງຂັ້ນສູນກາງ — 01 ສະບັບ ເພື່ອປະສານສົມທົບ
- ເຈົ້າເມືອງ 51 ເມືອງເປົ້າໝາຍທົດລອງ ທ່ານລະ — 01 ສະບັບ ເພື່ອປະສານສົມທົບ
- ຫົວໜ້າພະແນກ ຍທຂ ແຂວງ ແລະນະຄອນຫລວງວຽງຈັນ ທ່ານລະ — 01 ສະບັບ ເພື່ອປະສານສົມທົບ
- ຫົວໜ້າຫ້ອງການ ຍທຂ 51 ເມືອງເປົ້າໝາຍທົດລອງ ທ່ານລະ — 01 ສະບັບ ເພື່ອປະສານສົມທົບ
- ສໍາເນົາເກັບມ້ຽນ — 02 ສະບັບ